ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ

ຫ້ອງການ

ເລກທີ: 54 /ຫກ

ນະຄອນຫຼວງວຽງຈັນ,ວັນທີ: 07 ທັນວາ 2017

ສຳນັກງານ ຄຄຊ
ເລກທີ 1323
ວັນທີ 08.DEC.2017
ໂທລະສັບ 021 217770

## ບົດລາຍງານ

### ລາຍງານການເຄື່ອນໄຫວຂອງທະນາຄານແຫ່ງສປປລາວ
### ປະຈຳອາທິດທີ 20-24/11/2017 ແລະ ແຜນການເຄື່ອນໄຫວໃນອາທິດຕໍ່ໄປ

**I. ວຽກງານການເມືອງແນວຄິດ**

ສະພາບການເມືອງແນວຄິດຂອງພະນັກງານພາຍໃນຂະແໜງທະນາຄານມີຄວາມສະຫງົບປົກກະຕິ, ພະນັກງານມີຄວາມອຸ່ນອ່ຽນທຸ່ນທ່ຽງ, ເຊື່ອໝັ້ນຕໍ່ການນຳພາຂອງພັກ-ລັດ, ມີສະຕິເຄົາລົບຕໍ່ການຈັດຕັ້ງ, ລະບຽບກົດໝາຍ ແລະ ຕັ້ງໜ້າປະຕິບັດໜ້າທີ່ວຽກງານຕາມທີ່ໄດ້ຮັບມອບໝາຍຢ່າງຕັ້ງໜ້າ, ມີຄວາມສາມັກຄີທັງພາຍໃນ ແລະ ພາຍນອກເປັນຢ່າງດີ.

**II. ການເຄື່ອນໄຫວວຽກງານວິຊາສະເພາະ**

**1. ສະພາບເສດຖະກິດເງິນຕາສາກົນ**

**1.1 ອັດຕາແລກປ່ຽນສາກົນ**

ອັດຕາແລກປ່ຽນຢູ່ຕະຫຼາດສາກົນອາທິດນີ້ທຽບໃສ່ອາທິດຜ່ານມາເຫັນວ່າ: ເງິນໂດລາສະຫະລັດອ່ອນຄ່າລົງ 0,48% ທຽບເອີໂຣ ເນື່ອງຈາກຕົວເລກເສດຖະກິດຂອງສະຫະລັດອາເມລິກາ ອອກມາບໍ່ດີ ເປັນຕົ້ນແມ່ນຍອດການສັ່ງຊື້ສິນຄ້າຄົງທົນ ຫຼຸດລົງ 1,20% ຂອງເດືອນ 10/2017 ຈາກເພີ່ມຂຶ້ນ 2,20% ໃນເດືອນຜ່ານມາ; ພ້ອມກັນນັ້ນ, ຈຳນວນປະຊາຊົນທີ່ຂໍສະຫວັດດີການຕໍ່ເນື່ອງເພີ່ມຂຶ້ນເປັນ 1,90 ລ້ານຄົນ ຂອງອາທິດທີ 11/11/2017 ຈາກ 1,87 ລ້ານຄົນໃນອາທິດຜ່ານມາ.

| ສະກຸນເງິນຕ່າງໆທຽບກັບໂດລາ | ອາທິດຜ່ານມາ 13-17/11/2017 | ອາທິດນີ້ 20-24/11/2017 | ເປີເຊັນ ແຂງຄ່າ(+) / ອ່ອນຄ່າ(–) |
|---|---|---|---|
| ໂດລາ/ເອີໂຣ | 1,1794 | 1,1851 | -0,48% |
| ເຢນ/ໂດລາ | 112,53 | 111,44 | 0,98% |
| ບາດ/ໂດລາ | 32,830 | 32,670 | 0,49% |
| ເປໂຊ/ໂດລາ | 50,88 | 50,71 | 0,35% |
| ຣູເປັຍ/ໂດລາ | 13.525 | 13.510 | 0,11% |
| ໂດລາສິງກະໂປ/ໂດລາ | 1,3568 | 1,3460 | 0,80% |
| ຢວນ/ໂດລາ | 6,6329 | 6,5880 | 0,68% |

**1.2 ສະພາບລາຄານ້ຳມັນ ແລະຄຳໃນຕະຫຼາດໂລກ**

- ລາຄານ້ຳມັນ ເພີ່ມຂຶ້ນ 3,32% ຈາກ 55,95 ໂດລາ/ບາເຣວ ມາເປັນ 57,81 ໂດລາ/ບາເຣວ ເນື່ອງຈາກຄັງສຳຮອງນ້ຳມັນດິບຂອງສະຫະລັດອາເມລິກາ ຫຼຸດລົງ 1,86 ລ້ານບາເຣວ ຂອງອາທິດທີ 17/11/2017 ຈາກເພີ່ມຂຶ້ນ 1,85 ລ້ານບາເຣວ ໃນອາທິດຜ່ານມາ;

- ສຳລັບລາຄາຄຳ ເພີ່ມຂຶ້ນ 0,69% ຈາກ 1.282,96 ໂດລາ/ອອນ ມາເປັນ 1.291,78 ໂດລາ/ອອນ ເນື່ອງຈາກການອ່ອນຄ່າຂອງເງິນໂດລາທຽບໃສ່ສະກຸນເງິນເອີໂຣ ແລະ ສະກຸນເງິນອື່ນໆ ເຮັດໃຫ້ນັກລົງທຶນເຂົ້າຊື້ຄຳ ແລະ ສັນຍາຊື້-ຂາຍຄຳ ຊຶ່ງເປັນຊັບສິນທີ່ປອດໄພເພີ່ມຂຶ້ນ.

## 2. ສະພາບເສດຖະກິດເງິນຕາພາຍໃນ

### 2.1 ສະພາບອັດຕາແລກປ່ຽນພາຍໃນ

ສະພາບອັດຕາແລກປ່ຽນອາທິດນີ້ທຽບໃສ່ອາທິດຜ່ານມາ ເຫັນວ່າເງິນກີບທຽບໃສ່ເງິນໂດລາແຂງຄ່າຂຶ້ນ 0,20% ແຕ່ອ່ອນຄ່າລົງ 0,27% ເມື່ອທຽບໃສ່ສະກຸນເງິນບາດ. ທຽບໃສ່ທ້າຍປີຜ່ານມາເຫັນວ່າເງິນກີບແຂງຄ່າ 0,20% ທຽບໃສ່ສະກຸນເງິນໂດລາ ແຕ່ອ່ອນຄ່າລົງ 8,22% ທຽບໃສ່ສະກຸນເງິນບາດ.

| ອັດຕາ | ອາທິດຜ່ານມາ 13-17/11/2017 | | | ອາທິດນີ້ 20-24/11/2017 | | | %ທຽບອາທິດຜ່ານມາ | | | ທຽບທ້າຍປີຜ່ານມາ | | |
|---|---|---|---|---|---|---|---|---|---|---|---|---|
| | ຊື້ | ຂາຍ | ສະເລັ່ຍ | ຊື້ | ຂາຍ | ສະເລັ່ຍ | ຊື້ | ຂາຍ | ສະເລັ່ຍ | ຊື້ | ຂາຍ | ສະເລັ່ຍ |
| ອັດຕາທະຄານ[1] | | | | | | | | | | | | |
| ໂດລາ | 8.324.95 | 8.351,24 | 8.335,52 | 8.310,31 | 8.332,12 | 8.318,65 | 0,18% | 0,23% | 0,20% | 0,08% | 0,27% | 0,20% |
| ບາດ | 253,85 | 255,43 | 254,90 | 254,73 | 256,20 | 255,59 | -0,34% | -0,30% | -0,27% | -8,30% | -8,23% | -8,22% |

### 2.2 ສະພາບຖານເງິນຕາແລະປະລິມານເງິນM2

- ຖານເງິນຕາປະຈຳອາທິດນີ້ ເພີ່ມຂຶ້ນ 0,80% ເມື່ອທຽບໃສ່ອາທິດຜ່ານມາ ຖ້າທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ເພີ່ມຂຶ້ນ 13,85%;
- ປະລິມານເງິນ M2 ເພີ່ມຂຶ້ນ 0,44% ເມື່ອທຽບໃສ່ອາທິດຜ່ານມາ. ຖ້າທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ເພີ່ມຂຶ້ນ 14,37%.

### 2.3 ການຊື້-ຂາຍເງິນຕາ (ເງິນໂດລາ ແລະ ເງິນບາດ) ຂອງທົ່ວລະບົບທະນາຄານທຸລະກິດ

- ການຊື້-ຂາຍເງິນຕາຕ່າງປະເທດ (ເງິນໂດລາ ແລະ ເງິນບາດ) ຂອງບັນດາທະນາຄານທຸລະກິດກັບລູກຄ້າພາຍໃນປະຈຳອາທິດ (17-23/11/2017) ເຫັນວ່າ ທທກ ຊື້ໂດລາສຸດທິ 26,37 ລ້ານໂດລາ (ໃນນີ້ຊື້ໂດລາໄດ້ 49,35 ລ້ານໂດລາ ແລະ ຂາຍໂດລາໄດ້ 22,98 ລ້ານໂດລາ) ແຕ່ຂາຍເງິນບາດສຸດທິ 292,75 ລ້ານບາດ (ໃນນີ້ຊື້ບາດໄດ້ 167,18 ລ້ານບາດ ແລະ ຂາຍບາດໄດ້ 459,93 ລ້ານບາດ); ມູນຄ່າການຊື້-ຂາຍເງິນໂດລາ ແລະ ເງິນບາດເມື່ອທຽບໃສ່ອາທິດຜ່ານມາເຫັນວ່າເງິນໂດລາ ເພີ່ມຂຶ້ນ 32,45% ແຕ່ເງິນບາດ ຫຼຸດລົງ 12,17%.
- ການຊື້-ຂາຍລະຫວ່າງ ທຫລ ກັບ ທທກ ເຫັນວ່າ: ທຫລ ຂາຍເງິນໂດລາໃຫ້ທະນາຄານທຸລະກິດຈຳນວນ 9,23 ລ້ານໂດລາ ແລະ ເງິນບາດໃຫ້ທະນາຄານທຸລະກິດ ຈຳນວນ 34,43 ລ້ານບາດ;
- ການຊື້-ຂາຍລະຫວ່າງທະນາຄານທຸລະກິດດ້ວຍກັນເຫັນວ່າ: ມີປະລິມານຊື້-ຂາຍເງິນໂດລາ ຈຳນວນ 2,30 ລ້ານໂດລາສະຫະລັດ ແລະ ເງິນບາດ ຈຳນວນ 55,20 ລ້ານບາດ;
- ການຊື້-ຂາຍລະຫວ່າງ ທຫລ ກັບພາກສ່ວນອື່ນໆໃນອາທິດນີ້ ເຫັນວ່າ: ທຫລ ບໍ່ມີການຊື້-ຂາຍເງິນໂດລາ ແຕ່ເງິນບາດມີການຊື້-ຂາຍ ຈຳນວນ 2.000 ລ້ານບາດ.

1% ການປ່ຽນແປງຂອງອັດຕາແລກປ່ຽນທະນາຄານທຸລະກິດ ແມ່ນໄດ້ຈາກອັດຕາສະເລ່ຍຖ່ວງນ້ຳໜັກ

ສະພາບການຊື້-ຂາຍເງິນຕາຕ່າງປະເທດ(ຫົວໜ່ວຍ: ລ້ານ)

| | ອາທິດທີ່ຜ່ານມາ 10-16/11/2017 | | ອາທິດນີ້ 17-23/11/2017 | | (%) +ເພີ່ມຂຶ້ນ/-ຫຼຸດລົງ | |
|---|---|---|---|---|---|---|
| | ໂດລາ | ບາດ | ໂດລາ | ບາດ | ໂດລາ | ບາດ |
| **1. ການຊື້ເງິນຕາຕ່າງປະເທດ** | **31,27** | **149,00** | **49,35** | **167,18** | **57,82%** | **12,20%** |
| - ທ/ຄ ທຸລະກິດລັດ | 12,86 | 49,56 | 11,15 | 59,15 | -13,30% | 19,37% |
| - ທ/ຄ ທຸລະກິດອື່ນໆ | 18,41 | 99,44 | 38,20 | 108,02 | 107,50% | 8,63% |
| **2. ການຂາຍເງິນຕາຕ່າງປະເທດ** | **23,34** | **564,97** | **22,98** | **459,93** | **-1,54%** | **-18,59%** |
| - ທ/ຄ ທຸລະກິດລັດ | 9,62 | 212,47 | 12,87 | 123,72 | 33,78% | -41,77% |
| - ທ/ຄ ທຸລະກິດອື່ນໆ | 13,72 | 352,50 | 10,11 | 336,21 | -26,31% | -4,62% |
| ຊື້-ຂາຍສຸດທິ ທທກ | **7,93** | **-415,97** | **26,37** | **-292,75** | **232,53%** | **-29,62%** |
| - ຜິດດ່ຽງຊື້-ຂາຍ | 25,36% | -279,17% | 53,43% | -175,11% | 110,69% | -37,27% |
| - ມູນຄ່າການຊື້-ຂາຍ | **54,61** | **713,97** | **72,33** | **627,11** | **32,45%** | **-12,17%** |
| 3.ການຊື້-ຂາຍລະຫວ່າງທທລກັບ ທທກ | **-3,63** | **-167,80** | **-9,23** | **-34,43** | | |
| - ທຫລ ຊື້ຈາກ ທທກ | 0,00 | 0,00 | 0,00 | 0,00 | | |
| - ທຫລ ຂາຍໃຫ້ ທທກ | 3,63 | 167,80 | 9,23 | 34,43 | | |
| **4.ຊື້-ຂາຍລະຫວ່າງ ທທກ ດ້ວຍກັນ** | **5,30** | **38,00** | **2,30** | **55,20** | | |
| 5.ທຫລ ກັບ ພາກສ່ວນອື່ນໆ | **0,00** | **0,00** | **0,00** | **2.000** | | |
| -ທຫລ ຊື້ຈາກພາກສ່ວນອື່ນໆ | 0,00 | 0,00 | 0,00 | 2.000 | | |
| -ທຫລ ຂາຍໃຫ້ພາກສ່ວນອື່ນໆ | 0,00 | 0,00 | 0,00 | 0,00 | | |

**2.4 ສະພາບອັດຕາເງິນເຟີ້**

ອັດຕາເງິນເຟີ້ໃນເດືອນ 11/2017 ຄາດວ່າຈະຢູ່ໃນລະດັບ 0,27% (ຕົວເລກຄາດຄະເນ).

**2.5 ການຄຸ້ມຄອງເງິນຕາຕ່າງປະເທດ ແລະການສົ່ງເສີມນຳໃຊ້ເງິນກີບ**

ທະນາຄານແຫ່ງສປປ ລາວ ໄດ້ອະນຸຍາດໃຫ້ທະນາຄານທຸລະກິດນຳເຂົ້າເງິນຕາຕ່າງປະເທດໃນອາທິດນີ້ ເພີ່ມຂຶ້ນ 146,2% ທຽບໃສ່ອາທິດຜ່ານມາໂດຍມີຈຳນວນ 57,45 ລ້ານໂດລາສະຫະລັດທຽບເທົ່າ. ໃນນັ້ນ ໄດ້ອະນຸຍາດໃຫ້ທະນາຄານທຸລະກິດນຳເງິນຕາຕ່າງປະເທດອອກນອກ ສປປ ລາວ ຫຼຸດລົງ 40,2% ທຽບໃສ່ອາທິດຜ່ານມາ ໂດຍມີຈຳນວນ 38,64 ລ້ານໂດລາສະຫະລັດທຽບເທົ່າ.

**3. ສະພາບການເຄື່ອນໄຫວຊຳລະສະສາງຜ່ານທະນາຄານແຫ່ງສປປລາວ**

ແຊັກເຄື່ອນໄຫວຜ່ານສູນຊຳລະສະສາງຂອງ ທຫລ ໃນອາທິດນີ້ ຈຳນວນ 852 ສະບັບ ທຽບໃສ່ອາທິດຜ່ານມາ ຫຼຸດລົງ 40 ສະບັບ ເທົ່າກັບ 4,48% ລວມຈຳນວນເງິນທີ່ໂອນຜ່ານທັງໝົດ 266,03 ຕື້ກີບ ທຽບໃສ່ອາທິດຜ່ານມາ ຫຼຸດລົງ 136,46 ຕື້ກີບ ເທົ່າກັບ 33,90% ເມື່ອທຽບໃສ່ອາທິດຜ່ານມາ;

ການໂອນເງິນຜ່ານລະບົບຊຳລະສະສາງແບບມູນຄ່າສູງ (RTGS) ລະຫວ່າງວັນທີ(17-23/11/2017) ມີທັງໝົດ 3.709 ຄັ້ງ ໃນນັ້ນປະກອບດ້ວຍ:

- ສະກຸນເງິນກີບຈຳນວນ 3.490 ຄັ້ງ ລວມມູນຄ່າການໂອນທັງໝົດໃນອາທິດນີ້ທຽບໃສ່ອາທິດຜ່ານມາ ເຫັນວ່າເພີ່ມຂຶ້ນ 1.372,54 ຕື້ກີບ ຈາກ 789,4 ຕື້ກີບ ມາເປັນ 2.161,94 ຕື້ກີບເທົ່າກັບ 173,87%;
- ກະຊວງການເງິນ: ມີການເຄື່ອນໄຫວຈຳນວນ 219 ຄັ້ງ, ມູນຄ່າການໂອນໃນອາທິດນີ້ທຽບໃສ່ອາທິດຜ່ານມາ ເຫັນວ່າເພີ່ມຂຶ້ນ 441,31 ຕື້ກີບ ຈາກ 36,41 ຕື້ກີບ ມາເປັນ 477,71 ຕື້ກີບ.

4. <u>ສະພາບການຊື້-ຂາຍຫຼັກຊັບໃນຕະຫຼາດຫຼັກຊັບລາວ.</u>

ດັດຊະນີຕະຫຼາດຫຼັກຊັບລາວໃນອາທິດນີ້ປິດຢູ່ທີ່ 1.025,65 ຈຸດ ເພີ່ມຂຶ້ນ 0,15% ເມື່ອທຽບໃສ່ອາທິດຜ່ານມາ, ຕະຫຼອດອາທິດນີ້ ມີປະລິມານຊື້-ຂາຍຮຸ້ນທັງໝົດ 46.500 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 228,65 ລ້ານກວ່າກີບ ຫຼຸດລົງ 78,33% ທຽບໃສ່ອາທິດຜ່ານມາ. ໂດຍອາທິດນີ້ ມີຜູ້ລົງທຶນຕ່າງປະເທດຊື້-ຂາຍສະເລ່ຍ ກວມເອົາ 30,93% ຂອງມູນຄ່າການຊື້-ຂາຍທັງໝົດ.

| ຊື່ | ດັດຊະນີອາທິດທີ **13-17/11/2017** | ດັດຊະນີອາທິດທີ **20-24/11/2017** | %(ເພີ່ມຂຶ້ນ+)/(ຫຼຸດລົງ-) | ໝາຍເຫດ |
|---|---|---|---|---|
| ດັດຊະນີຕະຫຼາດຫຼັກຊັບລາວ | 1.024,15 | 1.025,65 | 0,15 | |

<u>ສະພາບການຊື້-ຂາຍຮຸ້ນຂອງຕະຫຼາດຫຼັກຊັບລາວ(LSX)</u> (ຫົວໜ່ວຍມູນຄ່າ 1.000ກີບ)

| | ອາທິດກ່ອນ | | | ອາທິດນີ້ | | | %ປ່ຽນແປງ | | |
|---|---|---|---|---|---|---|---|---|---|
| ລາຍຊື່ | ຈຳນວນ (ຮຸ້ນ) | ມູນຄ່າການຊື້-ຂາຍ (ກີບ) | ລາຄາສະເລ່ຍ (ກີບ) | ຈຳນວນ (ຮຸ້ນ) | ມູນຄ່າການຊື້-ຂາຍ (ກີບ) | ລາຄາສະເລ່ຍ (ກີບ) | ຈຳນວນ (ຮຸ້ນ) | ມູນຄ່າການຊື້-ຂາຍ (ກີບ) | ລາຄາສະເລ່ຍ (ກີບ) |
| ທະນາຄານການຄ້າຕ່າງປະເທດລາວມະຫາຊົນ | 22.000 | 97.580.000 | 4.435 | 12.500 | 67.880.000 | 5.430 | - 43,18 | -30,44 | 995 |
| ບໍລິສັດຜະລິດໄຟຟ້າລາວມະຫາຊົນ | 199.400 | 951.295.000 | 4.771 | 32.900 | 158.820.000 | 4.827 | -83,50 | -83,30 | 56 |
| ບໍລິສັດລາວເວີນມະຫາຊົນ | 500 | 3.150.000 | 7.000 | - | - | 7.000 | -100,00 | -100,00 | - |
| ບໍລິສັດປີໂຕລ້ຽມເທລດດິ້ງລາວມະຫາຊົນ | 100 | 230.000 | 2.300 | 100 | 230.000 | 2.300 | - | - | - |
| ບໍລິສັດສຸວັນນີໂຮມເຊັນເຕີມະຫາຊົນ | - | - | 2.950 | - | - | 2.950 | - | - | - |
| ບໍລິສັດພູສີກໍ່ສ້າງມະຫາຊົນ | 1.700 | 3.035.000 | 1.785 | 1.000 | 1.725.000 | 1.725 | -41,18 | -43,16 | -60 |
| ທັງໝົດ | 223.700 | 1.055.290.000 | 4.717 | 46.500 | 228.655.000 | 4.917 | -79,21 | -78,33 | |

3. <u>ວຽກງານອື່ນໆທີ່ພົ້ນເດັ່ນ.</u>

- ສຳເລັດການເຂົ້າຮ່ວມກອງປະຊຸມ, ຈັດກອງປະຊຸມ ແລະ ສຳມະນາຕ່າງໆ: ❶ ກອງປະຊຸມຄະນະປະຈຳພັກ-ຄະນະຜູ້ອຳນວຍການ ທຫລ ປະຈຳເດືອນ ພະຈິກ 2017 ທີ່ (ທຫລ); ❷ ກອງປະຊຸມປຶກສາຫາລືເພື່ອລະດົມຄຳເຫັນໃສ່ຮ່າງນິຕິກຳ 2 ສະບັບຄື: ຕົວແທນຜູ້ອອກຮຸ້ນກູ້ ແລະ ການກຳນົດລາຄາຮຸ້ນຂອງບໍລິສັດ ທີ່ສົນໃຈອອກຮຸ້ນ ຂອງ ສຄຄຊ ທີ່ (ທຫລ); ❸ ກອງປະຊຸມຄະນະປັບປຸງຮ່າງກົດໝາຍວ່າດ້ວຍລະບົບການຊຳລະຕາມການປະກອບຄຳເຫັນຂອງກອງປະຊຸມສະໄໝສາມັນ ເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ VIII ທີ່ (ທຫລ); ❹ ກອງປະຊຸມໂຕະມົນລະດັບຊາດ ທີ່ (ແຂວງຈຳປາສັກ) ແລະ ❺ ກອງປະຊຸມຄະນະວິຊາການປັບປຸງຄວາມເຂັ້ມແຂງຂອງຕະຫຼາດທຶນ ສປປ ລາວ ທີ່ (ທຫລ).

- ສຳເລັດການຈັດຕັ້ງພິທີເຊັນບົດບັນທຶກຄວາມເຂົ້າໃຈ ລະຫວ່າງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ, ຕະຫຼາດຫຼັກຊັບລາວ ແລະ ສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ;
- ເຮັດວຽກກັບຄະນະ IMF ທີ່ມາປະເມີນສະພາບເສດຖະກິດຂອງ ສປປ ລາວ;
- ສຳເລັດການເຂົ້າຢ້ຽມຂໍ່ານັບ ຄະນະນຳ ທຫລ ຈາກບໍລິສັດ ດາຕາຄອມ ຈຳກັດ.

**III. ແຜນວຽກຈຸດສຸມອາທິດຕໍ່ໄປ:**

- ສືບຕໍ່ດຳເນີນນະໂຍບາຍເງິນຕາ ແລະ ອັດຕາແລກປ່ຽນທີ່ໄດ້ກຳນົດໄວ້ໃນແຜນວຽກປະຈຳປີ ເພື່ອຮັກສາສະຖຽນລະພາບເງິນຕາແຫ່ງຊາດໃຫ້ມີຄວາມໝັ້ນທ່ຽງ; ສືບຕໍ່ຕິດຕາມຢ່າງເປັນປົກກະຕິໂດຍສະເພາະຕະຫຼາດເປີດ, ອັດຕາດອກເບ້ຍແລະອັດຕາແລກປ່ຽນລະຫວ່າງທະນາຄານ; ສືບຕໍ່ຕິດຕາມການຈັດຕັ້ງປະຕິບັດນະໂຍບາຍອັດຕາດອກເບັ້ຍຂອງ ທຫລ ແລະ ການສ້າງໂປຼແກຼມຕິດຕາມນະໂຍບາຍດັ່ງກ່າວຢ່າງໃກ້ຊິດ.
- **ກະກຽມຈັດກອງປະຊຸມ ແລະ ເຂົ້າຮ່ວມກອງປະຊຸມ ແລະ ສຳມະນາຕ່າງໆ:** ❶ ກະກຽມກອງປະຊຸມ ສະພາບໍລິຫານທະນາຄານແຫ່ງ ສປປ ລາວ ສະໄໝສາມັນ ປະຈຳປີ 2017; ❷ ກອງປະຊຸມປັບປຸງໂຄງສ້າງຂອງ 2 ທະນາຄານ ທຸລະກິດລັດ ທີ່ (ທຫລ); ❸ ກອງປະຊຸມຄະນະປັບປຸງຮ່າງກົດໝາຍວ່າດ້ວຍລະບົບການຊຳລະແຫ່ງຊາດ ທີ່ (ແຂວງວຽງຈັນ); ❹ ກະກຽມກອງປະຊຸມສຳມະນາໃນຫົວຂໍ້: ການຕ້ານການສະໜອງທຶນໃຫ້ແກ່ການກໍ່ການຮ້າຍໃນຂັ້ນລະດັບສູງ ລະຫວ່າງວັນທີ 27 ພະຈິກ - 01 ທັນວາ 2017; ❺ ກອງປະຊຸມເພື່ອປຶກສາຫາລື ກ່ຽວກັບຮ່າງແຜນສ້າງຄວາມເຂັ້ມແຂງໃຫ້ແກ່ຕະຫຼາດທຶນລາວ ແລະ ຮ່າງແຜນປັບປຸງການຄຸ້ມຄອງບໍລິຫານຂອງຕະຫຼາດຫຼັກຊັບລາວ ທີ່ (ທຫລ) ແລະ ❻ ພິທີມອບລາງວັນອາຊຽນດ້ານການພັດທະນາແມ່ຍິງ, ການພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກ ທີ່ (ໂຮງແຮມແລນມາກ).
- ຮອງຜູ້ວ່າການພ້ອມດ້ວຍຄະນະກະກຽມເດີນທາງເຄື່ອນໄຫວວຽກງານທາງລັດຖະການ ຢູ່ແຂວງສະຫວັນນະເຂດ ແລະ ແຂວງຄຳມ່ວນ;
- ກະກຽມເຂົ້າຮ່ວມພິທີວາງພວງມະລາ ຢູ່ອານຸສາວະລີນັກຮົບນິລະນາມ ແລະ ວາງກະຕ່າດອກໄມ້ ຢູ່ຫໍພິພິທະພັນ ໄກສອນ ພົມວິຫານ ເນື່ອງໃນວັນຄ້າຍວັນເກີດ ປະທານ ໄກສອນ ພົມວິຫານ ຄົບຮອບ 97 ປີ.

ຣ. ຫົວໜ້າຫ້ອງການ

ທະນາຄານແຫ່ງ ສປປ ລາວ
ຫ້ອງການ

ສຸກັນ ຈັນທະວົງ